# ແຜນການພັດທະນາຊັບພະຍາກອນມະນຸດ
# ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
# 5 ປີ 2021-2025

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

2022

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 570 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ: 06 ກໍລະກົດ 2022

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ນຳໃຊ້ແຜນການພັດທະນາຊັບພະຍາກອນ ມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 5 ປີ 2021-2025

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ດຳລັດວ່າດ້ວນການຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງ ຊາດ ຮອດ ປີ 2025 ສະບັບເລກທີ 95/ລບ, ລົງວັນທີ 26 ເມສາ 2016;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 1** ເຫັນດີຮັບຮອງ ແລະ ນຳໃຊ້ແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສຳລັບ 5 ປີ 2021-2025.

**ມາດຕາ 2** ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ເປັນເຈົ້າການປະສານສົມທົບກັບບັນດາກົມ, ກອງວິຊາການພາຍ ໃນກະຊວງ ແລະ ພາກສ່ວນກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງ ປະຕິບັດແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 5 ປີ 2021-2025 ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3** ໃຫ້ຫ້ອງການກະຊວງ, ກົມຈັດຕັ້ງ ແລະ ພະນັກງານ, ບັນດາກົມ ແລະ ພາກສ່ວນອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມທັງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

**ສວນສະຫວັນ ວິຍະເກດ**

# ຄຳນຳ

ແຜນການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບນີ້ ໄດ້ກຳນົດແຜນການພັດທະນາຊັບພະຍາກອນມະນຸດຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025 ແລະ ແຜນຈັດຕັ້ງປະຕິບັດງານພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປີ 2021-2025.

ຈຸດປະສົງ: ເພື່ອສືບຕໍ່ຜັນຂະຫຍາຍເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງທີ X ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ມາເປັນແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄຸນນະພາບ ແລະ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ແນໃສ່ປະກອບສ່ວນປົກປັກຮັກສາ ແລະ ພັດທະນາປະເທດຊາດ.

ແຜນການພັດທະນາຊັບພະຍາກອນມະນຸດສະບັບນີ້ ສ້າງຂຶ້ນເພື່ອຈະນຳໃຊ້ເຂົ້າໃນແຜນການກໍ່ສ້າງ-ບຳລຸງພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍສະເພາະແມ່ນຈະເນັ້ນໃນການສ້າງບຸກຄະລາກອນໃຫ້ມີຄຸນນະພາບ ແລະ ປະລິມານຢ່າງເໝາະສົມ ຊຶ່ງເປັນກຳລັງແຮງຊຸກດັນໃຫ້ແກ່ການຈັດຕັ້ງປະຕິບັດແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025 ໃຫ້ປະກົດຜົນເປັນຈິງ.

ແຜນການພັດທະນາຊັບພະຍາກອນມະນຸດສະບັບນີ້ປະກອບດ້ວຍ: ① ພາກສະເໜີ, ② ສະພາບການພັດທະນາພະນັກງານ-ລັດຖະກອນໄລຍະຜ່ານມາ, ③ ແຜນການພັດທະນາພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025.

ໃນນາມກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍສະແດງຄວາມຂອບໃຈມາຍັງພາກສ່ວນຕ່າງໆ ທີ່ໄດ້ປະກອບຄຳຄິດຄຳເຫັນ ແລະ ໃຫ້ການຮ່ວມມືໃນການປະກອບຂໍ້ມູນເຂົ້າໃນແຜນການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບນີ້ ເຖິງຢ່າງໃດກໍ່ຕາມບໍ່ປະສະຈາກໄດ້ຂໍ້ຂາດຕົກບົກພ່ອງໃນດ້ານຕ່າງໆ ຫວັງຢ່າງຍິ່ງວ່າບັນດາທ່ານທີ່ໄດ້ອ່ານ ແລະ ໄດ້ນຳໃຊ້ຈະໃຫ້ຂໍ້ຄິດເຫັນທີ່ເປັນປະໂຫຍດໃຫ້ແກ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພວກເຮົາດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ 06 ກໍລະກົດ 2022

**ຮອງລັດຖະມົນຕີ**

**ປະທານຄະນະພັດທະນາຊັບພະຍາກອນມະນຸດ ຂະແໜງ ຖວທ**

ວັນສີ ກົວມົວ

# ສາລະບານ


ເນື້ອໃນ ໜ້າ

ຄໍານໍາ.....................................................................

I.ພາກສະເໜີ.....................................................................1

1. ບ່ອນອີງ.....................................................................1

2. ຄວາມເປັນມາ.....................................................................1

3. ເປົ້າໝາຍລວມ.....................................................................1

5. ຈຸດປະສົງ.....................................................................2

II.ສະພາບການພັດທະນາຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໃນໄລຍະຜ່ານມາ..........................2

1. ສະພາບລວມ.....................................................................2

2. ຜົນສໍາເລັດ ແລະ ຂໍ້ຄົງຄ້າງ.....................................................................3

2.1 ດ້ານການສຶກສາອົບຮົມການເມືອງ-ແນວຄິດ.....................................................................3

2.2 ດ້ານການຄຸ້ມຄອງພະນັກງານ-ລັດຖະກອນ.....................................................................3

2.3 ດ້ານການກໍ່ສ້າງພະນັກງານ-ລັດຖະກອນ.....................................................................4

2.4 ການພົວພັນ ແລະ ຮ່ວມມືກັບຕ່າງປະເທດ.....................................................................6

3. ສາເຫດທີ່ພາໃຫ້ມີຜົນສໍາເລັດ ແລະ ຂໍ້ຄົງຄ້າງ.....................................................................6

3.1 ສາເຫດທີ່ພາໃຫ້ມີຜົນສໍາເລັດ.....................................................................6

3.2 ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ.....................................................................7

4. ກາລະໂອກາດ ແລະ ສິ່ງທ້າທາຍ.....................................................................7

4.1 ກາລະໂອກາດ.....................................................................7

4.2 ສິ່ງທ້າທາຍ.....................................................................7

III.ແຜນການພັດທະນາຊັບພະຍາກອນມະນຸດຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຮອດປີ 2025.......9

1. ເປົ້າໝາຍ.....................................................................9

2. ຂອບເຂດການນໍາໃຊ້.....................................................................9

3.ແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຮອດປີ2025..9
4.1 ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ..........................10
4.2 ກໍ່ສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ;..........................................................................11
4.3 ພັດທະນາວຽກງານສື່ມວນຊົນ ..........................................................................................12
4.4 ພັດທະນາວຽກງານວັດທະນະທຳ.........................................................................................14
4.5 ພັດທະນາວຽກງານການທ່ອງທ່ຽວ ......................................................................................15
4.6 ພັດທະນາວຽກງານການສຶກສາ...........................................................................................17
4.7 ສົ່ງເສີມການຮ່ວມມືການພັດທະນາກັບພາກພື້ນ ແລະ ສາກົນ...................................................18
IV.ການຕິດຕາມ ແລະ ປະເມີນຜົນ.......................................................................................18
V.ມາດຕະການຈັດຕັ້ງປະຕິບັດ..............................................................................................19
ເອກະສານຊ້ອນທ້າຍ .......................................................................................................21
ເອກະສານອ້າງອີງ ..........................................................................................................44

# I. ພາກສະເໜີ

1. ບ່ອນອີງ

- ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ສະບັບເລກທີ 95/ລບ, ລົງວັນທີ 26 ເມສາ 2016;
- ວິໄສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## 2. ຄວາມເປັນມາ

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ຂອງລັດຖະບານໄດ້ກຳນົດວ່າ ການພັດທະນາຊັບພະຍາກອນມະນຸດ ເປັນປັດໄຈຕັດສິນການພັດທະນາປະເທດຊາດ ແລະ ໃນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ທີ່ໄດ້ກຳນົດໃຫ້ມີຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຢູ່ຂັ້ນກະຊວງ.

ນອກຈາກນັ້ນ, ຍັງມີວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາໄລຍະ 10 ປີ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ກຳນົດວ່າ: "ເພື່ອເຮັດໃຫ້ພະນັກງານ-ລັດຖະກອນໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການໃຫ້ມີຄວາມຊ່ຽວຊານ, ຊຳນານງານ, ມີຄຸນສົມບັດ, ຈັນຍາບັນໃນການບໍລິຫານວຽກງານໄດ້ ແລະ ສາມາດຈັດຕັ້ງປະຕິບັດວຽກງານ ເພື່ອຕອບສະໜອງໜ້າທີ່ການເມືອງຂອງຕົນໄດ້ຢ່າງມີຜົນສຳເລັດ".

ສະນັ້ນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ສ້າງແຜນການເຄື່ອນໄຫວຂອງຄະນະດັ່ງກ່າວ ເພື່ອດຳເນີນສ້າງແຜນການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແນໃສ່ບຳລຸງ-ກໍ່ສ້າງ ແລະ ພັດທະນາຄວາມຮູ້, ຄວາມສາມາດໃຫ້ແກ່ພະນັກງານ-ລັດຖະກອນ ເພື່ອປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສາມາດຕອບສະໜອງໄດ້ກັບການພັດທະນາຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## 3. ເປົ້າໝາຍລວມ

3.1 ເພື່ອຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ແຜນການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄລຍະ 10 ປີ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ປີ 2016-2025);

3.2 ເພື່ອບັນລຸເປົ້າໝາຍການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

### 4. ຈຸດປະສົງ

4.1 ເພື່ອເຮັດໃຫ້ຄວາມຮູ້ຄວາມສາມາດຂອງພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມເຂັ້ມແຂງທາງດ້ານວິຊາການ, ສອດຄ່ອງກັບຍຸກປະຈຸບັນໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝ;

4.2 ເພື່ອບຳລຸງ-ກໍ່ສ້າງ, ຍົກລະດັບ ແລະ ພັດທະນາຄວາມຮູ້, ຄວາມສາມາດພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນລະດັບຕ່າງໆ ໃຫ້ມີຄຸນນະພາບສູງ;

4.3 ເພື່ອສ້າງແຜນການກຳນົດພະນັກງານນຳພາ-ຄຸ້ມຄອງ ຕິດພັນກັບແຜນບຳ-ລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## II. ສະພາບການພັດທະນາຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນໄລຍະຜ່ານມາ

### 1. ສະພາບລວມ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກະຊວງໜຶ່ງໃນກົງຈັກການຈັດຕັ້ງຂອງລັດຖະບານ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກກ່ຽວກັບການພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນສູນກາງ ແລະ ທ້ອງຖິ່ນ ເຊິ່ງເຮັດໜ້າທີ່ໃນການຄຸ້ມຄອງສື່ມວນຊົນ, ຄຸ້ມຄອງວັດທະນະທຳ ແລະ ຄຸ້ມຄອງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເຊິ່ງມີໂຄງປະກອບກົງຈັກ: ຂັ້ນກົມ ແລະ ທຽບເທົ່າກົມມີ 12 ກົມ, ຫົວໜ່ວຍກົງຈັກວິຊາການລະດັບ1: 07 ຫົວໜ່ວຍວິຊາການ, ຫົວໜ່ວຍກົງຈັກວິຊາການລະດັບ2: 09 ຫົວໜ່ວຍວິຊາການ ໃນນັ້ນມີສະຖານການສຶກສາທີ່ຂຶ້ນກັບກະຊວງເຮັດໜ້າທີ່ການຮຽນ-ການສອນຖືກຕ້ອງຕາມລະບຽບຫຼັກການຂອງກະຊວງສຶກສາທິການ ແລະ ກິລາ ມີຈຳນວນ 05 ສະຖານການສຶກສາ ແລະ 01 ສະຖາບັນຝຶກອົບຮົມໄລຍະສັ້ນໃຫ້ແກ່ພະນັກງານວິຊາການຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ພະນັກງານ-ລັດຖະກອນ ທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ລວມທັງໝົດ 4.445 ຄົນຍິງ 1.842 ຄົນ (ປີ 2021) ໃນນີ້ຢູ່ຂັ້ນສູງກາງ 1.430 ຄົນ, ຍິງ 618 ຄົນ; ຂັ້ນແຂວງ 1.623 ຄົນ, ຍິງ 710 ຄົນ, ຂັ້ນເມືອງ 1.243 ຄົນ, ຍິງ 463 ຄົນ ແລະ ລັດຖະກອນຄູຢູ່ບັນດາສະຖາບັນການສຶກສາທີ່ຂຶ້ນກັບກະຊວງ ມີຈຳນວນ 149 ຄົນ, ຍິງ 51 ຄົນ;

ສະມາຊິກພັກ ຢູ່ຂັ້ນສູນກາງ (ປີ2021) ມີຈຳນວນ 854 ສະຫາຍ, ຍິງ 324 ສະຫາຍ, ເຊິ່ງມີສະມາຊິກພັກສົມບູນ 628 ສະຫາຍ, ຍິງ 243 ສະຫາຍ, ສະມາຊິກພັກສຳຮອງ 60 ສະຫາຍ, ຍິງ 35 ສະຫາຍ, ສະມາຊິກພັກບຳນານ 166 ສະຫາຍ, ຍິງ 44 ສະຫາຍ;

ລະດັບວິຊາສະເພາະມີຄື: ປະລິນຍາເອກ 09 ຄົນ, ຍິງ 02 ຄົນ; ປະລິນຍາໂທ 413 ຄົນ, ຍິງ 194 ຄົນ; ປະລິນຍາຕີ 1.982 ຄົນ, ຍິງ 985 ຄົນ; ຊັ້ນສູງ 1.506 ຄົນ, ຍິງ 587 ຄົນ; ຊັ້ນກາງ 417 ຄົນ, ຍິງ 69 ຄົນ; ຊັ້ນຕົ້ນ 106 ຄົນ, ຍິງ 55 ຄົນ ແລະ ບໍ່ມີຊັ້ນວິຊາສະເພາະ 12 ຄົນ, ຍິງ 0 ຄົນ;

ສະມາຊິກພັກທີ່ໄດ້ຜ່ານການບຳລຸງທິດສະດີ-ການເມືອງການປົກຄອງແລ້ວ ຈຳນວນ 468 ສະຫາຍ, ຍິງ 154 ສະຫາຍ; ຖ້າທຽບກັບອັດຕາສ່ວນຮ້ອຍຂອງຈານວນສະມາຊິກພັກສົມບູນທັງໝົດ ເທົ່າກັບ 55% ໃນນີ້ໄດ້

ຜ່ານການບຳລຸງທິດສະດີການເມືອງ-ການປົກຄອງ ຂັ້ນສູງ 122 ສະຫາຍ, ຍິງ 28 ສະຫາຍ, ຂັ້ນກາງ 05 ສະຫາຍ, ຍິງ 02 ສະຫາຍ ແລະ ຂັ້ນຕົ້ນ 341 ສະຫາຍ, ຍິງ 124 ສະຫາຍ;

ສະມາຊິກພັກທີ່ໄດ້ຍັງບໍ່ທັນໄດ້ຜ່ານການບຳລຸງທິດສະດີການເມືອງ-ການປົກຄອງແລ້ວ ຈຳນວນ 386 ສະຫາຍ, ຍິງ 170 ສະຫາຍ ສະນັ້ນ, ສະມາຊິກພັກສົມບູນທີ່ຍັງບໍ່ທັນໄດ້ຜ່ານການບຳລຸງທິດສະດີການເມືອງ-ການປົກຄອງມີຢູ່ 45% ຂອງຈຳນວນສະມາຊິກພັກສົມບູນທັງໝົດ.

ລັດຖະກອນ ມີຕຳແໜ່ງບໍລິຫານ ປະເພດ 1-6 ໃນຂະແໜງການ ຖວທ (ຂັ້ນສູນກາງ) ມີຈຳນວນ 464 ຄົນ, ຍິງ 170 ຄົນ, ເຊິ່ງປະກອບມີຕຳແໜ່ງບໍລິຫານ ປະເພດ1: ມີ 03 ຄົນ, ຍິງ 02 ຄົນ, ຕຳແໜ່ງບໍລິຫານປະເພດ 2: ມີ 17 ຄົນ, ຍິງ 04 ຄົນ, ຕຳແໜ່ງບໍລິຫານປະເພດ3: ມີ 58 ຄົນ, ຍິງ 20 ຄົນ, ຕຳແໜ່ງບໍລິຫານປະເພດ4: ມີ 110 ຄົນ, ຍິງ 33 ຄົນ ຕຳແໜ່ງບໍລິຫານປະເພດ5: ມີ 216 ຄົນ, ຍິງ 82 ຄົນ, ຕຳແໜ່ງບໍລິຫານປະເພດ6: ມີ 60 ຄົນ, ຍິງ 29 ຄົນ.

## 2. ຜົນສຳເລັດ ແລະ ຂໍ້ຄົງຄ້າງ

### 2.1 ດ້ານການສຶກສາອົບຮົມການເມືອງ-ແນວຄິດ

- **ຜົນສຳເລັດ**

ຄະນະພັກ, ຄະນະນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ເອົາໃຈໃສ່ຊີ້ນຳ ແລະ ຊຸກຍູ້ ໃຫ້ພະນັກງານ-ລັດຖະກອນໄດ້ເຊື່ອມຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆຂອງພັກ ແລະ ລັດ ທີ່ວາງອອກໃນແຕ່ລະໄລຍະດ້ວຍຫຼາຍຮູບການເຊັ່ນ: ເຜີຍແຜ່, ເຊື່ອມຊຶມ, ຈັດຕັ້ງປາຖະກະຖາ, ເລົ່າມູນເຊື້ອເນື່ອງໃນໂອກາດວັນສຳຄັນຕ່າງໆຂອງພັກ-ລັດ ແລະ ຂອງຊາດ ເພື່ອໃຫ້ກຳແໜ້ນການເມືອງ-ແນວຄິດ ແລະ ໄດ້ຈັດຕັ້ງເປີດການບຳລຸງທິດສະດີການເມືອງ-ການປົກຄອງ ໃຫ້ພະນັກງານ-ລັດຖະກອນໃຫ້ມີຄວາມຮັບຮູ້, ຄວາມສາມາດບໍລິຫານວຽກງານ, ເຂົ້າໃຈແນວທາງນະໂຍບາຍຂອງພັກ, ມີຫຼັກໝັ້ນທາງດ້ານການເມືອງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ຕໍ່ອຸດົມການສັງຄົມ-ນິຍົມ, ມີນ້ຳໃຈຮັກຊາດ, ຮັບໃຊ້ປະຊາຊົນ, ມີຄວາມສາມັກຄີ, ມີສະຕິຕໍ່ການຈັດຕັ້ງ, ມີສະຕິລະວັງຕົວສູງຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ຈຳແນກມິດ, ຈຳແນກສັດຕູຢ່າງຈະແຈ້ງ, ມີແນວຄິດອຸ່ນອ່ຽງ, ທຸ່ນທ່ຽງ, ຍົກສູງຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມການມອບໝາຍສຳເລັດຜົນເປັນຢ່າງດີ.

- **ຂໍ້ຄົງຄ້າງ**

ເຖິງວ່າໄດ້ດຳເນີນດ້ວຍຫຼາຍເນື້ອໃນ, ຫຼາຍຮູບການ, ແຕ່ພະນັກງານ-ລັດຖະກອນ ຈຳນວນໜຶ່ງຍັງມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກຍັງບໍ່ທັນສູງ, ບໍ່ທັນເລິກເຊິ່ງ ຈຳນວນໜຶ່ງຍັງຖືເບົາຕໍ່ການສຶກສາຄົ້ນຄວ້າ, ເຊື່ອມຊຶມແນວທາງນະໂຍບາຍ, ບັນດາມະຕິ, ຄຳສັ່ງຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ, ສະຕິຕໍ່ການຈັດຕັ້ງ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງບໍ່ທັນສູງ ເຮັດໃຫ້ປະສິດທິພາບ ແລະ ປະສິດທິຜົນຂອງການເຮັດວຽກງານບໍ່ໄດ້ຮັບຜົນດີ.

### 2.2 ດ້ານການຄຸ້ມຄອງພະນັກງານ-ລັດຖະກອນ

- **ຜົນສຳເລັດ**

ໄລຍະຜ່ານມາຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ເອົາໃຈໃສ່ຕໍ່ກັບວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນ ໄດ້ຖືເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງໃຫ້ເປັນບ່ອນອີງໃນການສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຂົ້າສູ່ລະບົບເທື່ອລະກ້າວໂດຍສະເພາະແມ່ນການນຳໃຊ້ລະບົບຖານຂໍ້ມູນຄຸ້ມຄອງລັດຖະກອນ (PIMS) ສາມາດເກັບກຳດ້ານຈຳນວນພົນ, ບັນຊີສະຖິຕິຂອງພະນັກງານ-ລັດຖະກອນທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄົ້ນຄວ້າສັບຊ້ອນ, ຈັດວາງພະນັກງານ-ລັດຖະກອນໃຫ້ຖືກຕ້ອງຕາມຄວາມຮູ້, ຄວາມສາມາດ ແລະ ຕາມຕຳແໜ່ງງານ, ປັບປຸງໂຄງປະກອບບຸກຄະລາກອນຕາມການປັບປຸງກົງຈັກ, ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນກະຊວງ, ສ້າງແຜນຄວາມຕ້ອງການລັດຖະກອນໃໝ່ ເພື່ອທົດແທນພະນັກງານ-ລັດຖະກອນ ທີ່ອອກໃນຮູບການຕ່າງໆ ເຊິ່ງໃນແຕ່ລະປີລັດຖະບານໄດ້ສະໜອງຕົວເລກລັດຖະກອນໃໝ່ໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມຄວາມເໝາະສົມ ແລະ ໄດ້ຈັດແບ່ງໃຫ້ແຕ່ລະພາກສ່ວນຕາມຄວາມຈຳເປັນຕົວຈິງ ໂດຍເລັ່ງໃສ່ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ຈັດຕັ້ງການປະເມີນຜົນການປະຕິບັດວຽກງານປະຈຳປີຂອງພະນັກງານ-ລັດຖະກອນ ຄົ້ນຄວ້າ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມລະບຽບການຕ່າງໆຢ່າງເໝາະສົມ ເຊັ່ນ: ການເລື່ອນຊັ້ນ-ຂັ້ນ, ແຈ້ງຈຳນວນພົນຕາມຊັ້ນ-ຂັ້ນເງິນເດືອນໃນແຕ່ລະງວດຢ່າງປົກກະຕິ, ຍ້ອງຍໍ ແລະ ປະຕິບັດວິໄນຕ່າງໆຕາມລະບຽບຫຼັກການພ້ອມນັ້ນ, ໄດ້ເກັບກຳສະພາບການຄຸ້ມຄອງພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນທົ່ວປະເທດ.

- **ຂໍ້ຄົງຄ້າງ**

ເຖິງວ່າຈະມີກົດໝາຍ ແລະ ນິຕິກຳຕ່າງໆຫຼາຍສະບັບແຕ່ການຈັດຕັ້ງປະຕິບັດຍັງພົບຄວາມຫຍຸ້ງຍາກ ແລະ ບໍ່ທັນເປັນເອກະພາບ, ການປັບປຸງກົງຈັກການຈັດຕັ້ງຍັງຊັກຊ້າ, ການປະສານງານລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນບໍ່ຈອດກັນ ເປັນຕົ້ນ: ການແຕ່ງຕັ້ງ, ການຍົກຍ້າຍ, ການປັບປຸງລະບົບຖານຂໍ້ມູນຄຸ້ມຄອງລັດຖະກອນ ແລະ ບໍ່ທັນສະພາບການ ເຊັ່ນ: ລະບົບ (PIMS) ບາງພາກສ່ວນນຳໃຊ້ບໍ່ໄດ້ ແລະ ບໍ່ຕໍ່ເນື່ອງຍ້ອນອຸປະກອນຕອບສະໜອງການນຳໃຊ້ບໍ່ພຽງພໍ ເຮັດໃຫ້ການເຊື່ອມຕໍ່ເງິນເດືອນແບບທັນສະໄໝພົບຄວາມຫຍຸ້ງຍາກ, ການປະເມີນຜົນການປະຕິບັດວຽກງານຂອງລັດຖະກອນບໍ່ທັນຊັດເຈນເທົ່າທີ່ຄວນ, ການສ້າງຂໍ້ແຂ່ງຂັນບາງພາກສ່ວນບໍ່ທັນໄດ້ຈັດຕັ້ງປະຕິບັດ, ການສ້າງແຜນຄວາມຕ້ອງການລັດຖະກອນໃໝ່ບໍ່ຕອບສະໜອງໄດ້ຕາມຄວາມຕ້ອງການຕົວຈິງ, ຂັ້ນທ້ອງຖິ່ນຮັບອາສາສະໝັກເປັນຈຳນວນຫຼາຍເຮັດໃຫ້ມີຄວາມຫຍຸ້ງຍາກຕໍ່ກັບການຈັດແບ່ງຕົວເລກລັດຖະກອນໃໝ່, ການບັນຈຸຕຳແໜ່ງຂັ້ນຕ່າງໆບໍ່ຖືກກັບວິຊາສະເພາະ, ລັດຖະກອນທີ່ບັນຈຸເຂົ້າແລ້ວສະເໜີຂໍຍົກຍ້າຍ, ລາອອກສ້າງເສດຖະກິດຄອບຄົວ, ເຮັດໃຫ້ມີສະພາບພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີລັກສະນະເຫຼືອບໍ່ພໍ.

### 2.3 ດ້ານການກໍ່ສ້າງພະນັກງານ-ລັດຖະກອນ

- **ຜົນສຳເລັດ**

ເພື່ອບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະແມ່ນການຍົກສູງຄຸນນະພາບໃນຖັນແຖວພະນັກງານ-ລັດຖະກອນ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ຕິດພັນກັບແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ, ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ບຳລຸງກໍ່ສ້າງ-ພະນັກງານ-ລັດຖະກອນ ໃຫ້ມີຄວາມຮູ້ຄວາມສາມາດທາງດ້ານການຊີ້ນຳ-ນຳພາ ແລະ ວິຊາສະເພາະ ໃຫ້ມີຄວາມເຂັ້ມແຂງ ແລະ ຄຸນນະພາບສູງຂຶ້ນ ເຊັ່ນ:

ການບຳລຸງຍົກລະດັບທິດສະດີການເມືອງ-ການປົກຄອງ ຈຳນວນ 186 ສະຫາຍ, ຍິງ 72 ສະຫາຍ, ໃນນີ້ຂັ້ນສູງ 29 ສະຫາຍ, ຍິງ 07 ສະຫາຍ, ຂັ້ນກາງ 0 ສະຫາຍ, ຍິງ 0 ສະຫາຍ, ຂັ້ນຕົ້ນ 147 ສະຫາຍ, ຍິງ 62 ສະຫາຍ ແລະ ໄປແລກປ່ຽນດ້ານທິດສະດີໃນຫົວຂໍ້ສະເພາະ 10 ສະຫາຍ, ຍິງ 3 ສະຫາຍ;

ການສຶກສາຄົ້ນຄວ້າດ້ານວິຊາສະເພາະ ຈຳນວນ 253 ຄົນ, ຍິງ 100 ຄົນ ໃນນີ້ລະດັບປະລິນຍາເອກ 04 ຄົນ, ຍິງ 01ຄົນ, ປະລິນຍາໂທ 121 ຄົນ, ຍິງ 41 ຄົນ, ປະລິນຍາຕີ 127 ຄົນ, ຍິງ 57 ຄົນ ແລະ ອະນຸປະລິນຍາ 01 ຄົນ, ຍິງ 0 ຄົນ

ຈັດຕັ້ງເປີດການບຳລຸງທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ (45 ວັນ) ຢູ່ຂັ້ນກະຊວງ ຈຳນວນ 5 ຊຸດ ມີຜູ້ເຂົ້າຮ່ວມທັງໝົດ 147 ສະຫາຍ, ຍິງ 62 ສະຫາຍ;

ຈັດຕັ້ງເປີດການຝຶກອົບຮົມວິຊາສະເພາະ ໄລຍະສັ້ນ ໃຫ້ພະນັກງານ-ລັດຖະກອນ ຈຳນວນ 135 ຊຸດ ມີຜູ້ເຂົ້າຮ່ວມທັງໝົດ 3,867 ເທື່ອຄົນ, ຍິງ 1,450 ເທື່ອຄົນ;

ພະນັກງານ-ລັດຖະກອນເຂົ້າຮ່ວມຝຶກອົບຮົມວິຊາສະເພາະໄລຍະສັ້ນ ຈຳນວນ 3,978 ເທື່ອຄົນ, ຍິງ 1,574 ເທື່ອຄົນ;

ບັນດາສະຖາບັນການສຶກສາໄດ້ຮັບນັກຮຽນ-ນັກສຶກສາ ເຂົ້າຮຽນຕາມແຜນແບ່ງປັນຂອງກະຊວງສຶກສາທິການ ແລະ ກິລາ ຈຳນວນ 2.330 ທຶນ ໃນນັ້ນມີລະດັບປະລິນຍາໂທ 25 ທຶນ, ປະລິນຍາຕີ 440 ທຶນ, ຍິງ, ຊັ້ນສູງ 360 ທຶນ, ຊັ້ນກາງ 1.480 ທຶນ, ອັດຕາເຂົ້າຮຽນເທົ່າກັບ 69.44% ແລະ ການຮຽນຈົບເທົ່າກັບ 44.56%;

ການພັດທະນາວຽກງານສະຖານການສຶກສາ ໄດ້ສ້າງຫຼັກສູດການຮຽນ-ການສອນ ລະດັບປະລິນຍາໂທ ສາຂາ ບໍລິຫານຄຸ້ມຄອງສິລະປະ-ວັດທະນະທຳ ຢູ່ສະຖາບັນວິຈິດສິນແຫ່ງຊາດ, ສະເໜີສ້າງຫຼັກສູດການຮຽນ-ການສອນ ລະດັບປະລິນຍາຕີ ສາຂາ ວິຊາສິລະປະການສະແດງ ແລະ ຍົກຖານະໂຮງຮຽນສິລະປະແຫ່ງຊາດ ຂຶ້ນເປັນສະຖາບັນສິລະປະແຫ່ງຊາດ, ສ້າງຫຼັກສູດການຮຽນ-ການສອນ ຊັ້ນສູງ ສາຂາ ວິຈິດສິນພື້ນເມືອງຫຼວງພະບາງ ແລະ ຍົກຖານະໂຮງຮຽນວິຈິດສິນຫຼວງພະບາງ ຂຶ້ນເປັນວິທະຍາໄລວິຈິດສິນພື້ນເມືອງຫຼວງພະບາງ.

- **ຂໍ້ຄົງຄ້າງ**

ການຝຶກອົບຮົມ ແລະ ຍົກລະດັບພະນັກງານ ສ່ວນຫຼາຍແມ່ນອີງໃສ່ທຶນຂອງຕ່າງປະເທດ ແລະ ຄວາມອາດສາມາດດ້ານງົບປະມານຕົວຈິງ; ເນື້ອໃນຫຼັກສູດການຮຽນ-ການສອນ ຂອງໂຮງຮຽນສິລະແຫ່ງຊາດ ແລະ ກາຍຍະສິນ ຍັງບໍ່ທັນໄດ້ກວດຜ່ານ, ຮັບຮອງຕາມລະບຽບຫຼັກການຂອງກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ ແລະ ບໍ່ທັນເອກະພາບກັບການແຕ່ງເນື້ອໃນບົດສອນຕ່າງຄົນຕ່າງເຮັດ, ຕ່າງຄົນຕ່າງສອນບໍ່ຖືກຫຼັກການ; ລະດັບພາສາອັງກິດຂອງພະນັກງານບໍ່ທັນສູງ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການສະໝັກທຶນການສຶກສາຂອງຕ່າງປະເທດ ແລະ

ເຂົ້າຮ່ວມກອງປະຊຸມລະດັບສາກົນກໍ່ມີຄວາມຫຍຸ້ງຍາກ; ການກໍ່ສ້າງພະນັກງານ ສ່ວນຫຼາຍຍັງເນັ້ນໃສ່ແຕ່ການສ້າງຢູ່ສະຖາບັນການສຶກສາຕ່າງໆ, ບໍ່ທັນເອົາໃຈໃສ່ສ້າງຢູ່ທ້ອງຖິ່ນຮາກຖານ, ການຝຶກອົບຮົມວິຊາສະເພາະບໍ່ທັນທົ່ວເຖິງ, ການສ້າງແຜນບຳລຸງ-ກໍ່ສ້າງພະນັກງານບາງພາກສ່ວນບໍ່ທັນສຳເລັດ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການຄັດເລືອກເປົ້າໝາຍ.

### 2.4 ການພົວພັນ ແລະ ຮ່ວມມືກັບຕ່າງປະເທດ

❖ **ຜົນສຳເລັດ**

ໂດຍປະຕິບັດຕາມນະໂຍບາຍການຕ່າງປະເທດຂອງພັກ ແລະ ລັດຖະບານ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກໍ່ໄດ້ພົວພັນ-ຮ່ວມມືກັບບັນດາປະເທດເພື່ອມິດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຂົນຂວາຍທຶນຮອນມາຊ່ວຍໃນການຈັດຕັ້ງປະຕິບັດບັນດາວຽກຕ່າງໆ ໃນຮູບການຮ່ວມມືສອງຝ່າຍ ຫຼື ຫຼາຍຝ່າຍ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາພະນັກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ໄດ້ມີການແລກປ່ຽນການຢ້ຽມຢາມດ້ານວິຊາການ ແລະ ວິຊາສະເພາະ, ສົ່ງພະນັກງານໄປຝຶກອົບຮົມ, ຍົກລະດັບ ແລະ ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆ. ນອກຈາກນັ້ນ, ກໍ່ໄດ້ມີການເຊັນສັນຍາບົດບັນທຶກການຮ່ວມມືກັບຕ່າງປະເທດ ແລະ ສະຖາບັນການສຶກສາຕ່າງໆຢູ່ຕ່າງປະເທດກ່ຽວກັບວຽກງານພັດທະນາຊັບພະຍາກອນມະນຸດເຊິ່ງກັນ ແລະ ກັນ ພ້ອມທັງການກໍ່ສ້າງພະນັກງານ-ລັດຖະກອນໃນຮູບການຕ່າງໆ.

❖ **ຂໍ້ຄົງຄ້າງ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໄດ້ມີການເຊັນສັນຍາຮ່ວມມືກັບສະຖາບັນການສຶກສາ, ອົງການຈັດຕັ້ງສາກົນ ແລະ ຕ່າງປະເທດຫຼາຍສະບັບ ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນມີປະສິດທິຜົນສູງ; ການປະສານສົມທົບລະຫວ່າງຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ ແລະ ສະຖາບັນການສຶກສາບໍ່ທັນສອດຄ່ອງກົມກຽວເທົ່າທີ່ຄວນເຮັດໃຫ້ພົບຄວາມຫຍຸ້ງຍາກໃນການຕິດຕາມ, ກວດກາ ແລະ ສະຫຼຸບລາຍງານຊັກຊ້າແກ່ຍາວ.

## 3. ສາເຫດທີ່ພາໃຫ້ມີຜົນສຳເລັດ ແລະ ຂໍ້ຄົງຄ້າງ

### 3.1 ສາເຫດທີ່ພາໃຫ້ມີຜົນສຳເລັດ

ຄະນະນຳຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຕ່ລະຂັ້ນໄດ້ເອົາໃຈໃສ່ຕໍ່ກັບວຽກງານການພັດທະນາຊັບພະນາກອນມະນຸດ ດ້ວຍຄວາມຮັບຜິດຊອບສູງ ເພື່ອໃຫ້ພະນັກງານ-ລັດຖະກອນໄດ້ຮັບການບຳລຸງກໍ່ສ້າງ, ຍົກລະດັບທິດສະດີການເມືອງ-ການປົກຄອງ, ວິຊາສະເພາະ ແລະ ພາສາຕ່າງປະເທດ ໃຫ້ມີຄວາມເຂັ້ມແຂງຮັບປະກັນໃຫ້ພະນັກງານ-ລັດຖະກອນ ມີຄຸນນະພາບສູງ;

ເອົາໃຈໃສ່ສ້າງກົດໝາຍ, ນິຕິກຳຕ່າງໆເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ຍ້ອນຄວາມຕັດສິນໃຈສູ້ຊົນ, ບຸກບືນໃນການພັດທະນາຕົນເອງ ແລະ ມີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ;

ມີການຮ່ວມມື ແລະ ຊ່ວຍເຫຼືອຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະທດ.

### 3.2 ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

ຄວາມເປັນເຈົ້າການຂອງພະນັກງານ-ລັດຖະກອນຈຳນວນໜຶ່ງຍັງຖືເບົາຕໍ່ກັບຄົ້ນຄວ້າ, ເຊື່ອມຊຶມແນວທາງ-ນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງພັກ-ລັດ;

ການຕິດຕາມ, ປະເມີນຜົນການພັດທະນາຊັບພະຍາກອນມະນຸດບໍ່ທັນປົກກະຕິ ແລະ ບໍ່ຕໍ່ເນື່ອງ;

ລະດັບພາສາຕ່າງປະເທດຂອງພະນັກງານ-ລັດຖະກອນຈຳນວນໜຶ່ງຍັງຈຳກັດ ເຮັດໃຫ້ພົບຄວາມຫຍຸ້ງຍາກໃນການຍາດແຍ່ງທຶນການສຶກສາ ແລະ ການເຂົ້າຮ່ວມຝຶກອົບຮົມຢູ່ຕ່າງປະເທດ ພ້ອມນັ້ນຍັງຖືເບົາຕໍ່ການຊອກຮູ້ຮໍ່າຮຽນຍົກລະດັບຄວາມຮູ້ໃໝ່ໆຂອງພະນັກງານ-ລັດຖະກອນ;

ງົບປະມານຮັບໃຊ້ໃນການຈັດຕັ້ງການຝຶກອົບຮົມ, ຍົກລະດັບໃຫ້ພະນັກງານ-ລັດຖະກອນ ໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວມີຈຳກັດ.

## 4. ກາລະໂອກາດ ແລະ ສິ່ງທ້າທາຍ

### 4.1 ກາລະໂອກາດ

ພັກ ແລະ ລັດຖະບານ ໄດ້ຖືເອົາວຽກງານການພັດທະນາຊັບພະຍາກອນມະນຸດ ເປັນບ່ອນອີງໃນການບຳລຸງ-ກໍ່ສ້າງພະນັກງານ-ລັດຖະກອນ ເປັນສິ່ງສຳຄັນໃນການພັດທະນາເສດຖະກິດ-ສັງຄົມ;

ຄະນະພັກ, ຄະນະນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເອົາໃຈໃສ່ຍົກສູງຕໍ່ກັບວຽກງານການພັດທະນາຊັບພະຍາກອນມະນຸດ ທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນສູງ;

ອົງການປົກຄອງແຕ່ລະຂັ້ນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ໄດ້ໃຫ້ຄວາມຮ່ວມມືໃນການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ຄວາມກ້າວໜ້າທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ໄດ້ສ້າງໂອກາດໃຫ້ພະນັກງານ-ລັດຖະກອນໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ, ແຫຼ່ງການຮຽນຮູ້ໄດ້ຫຼາຍຂຶ້ນ;

ການຮ່ວມມືກັບປະຊາຄົມອາຊຽນສາມາດເປີດກວ້າງການພົວພັນຮ່ວມມື, ການແລກປ່ຽນບົດຮຽນ, ການຮຽນຮູ້ ແລະ ປະສົບການໄດ້ຢ່າງຫຼາກຫຼາຍ.

### 4.2 ສິ່ງທ້າທາຍ

ຄວາມຮູ້, ຄວາມສາມາດຂອງພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຍັງມີຄວາມແຕກໂຕນກັນ ລະຫວ່າງຕົວເມືອງ ແລະ ເຂດຫ່າງໄກສອກຫຼີກ ເປັນຕົ້ນ: ລະດັບທິດສະດີລະດັບພາສາອັງກິດ, ລະດັບວິຊາສະເພາະ ແລະ ການນຳໃຊ້ໄອຊີທີ;

ການລົງທຶນໃສ່ການພັດທະນາພະນັກງານ-ລັດຖະກອນຍັງບໍ່ທັນໄດ້ຕາມຄວາມຮຽກຮ້ອງຕ້ອງການ;

ການຈັດຕັ້ງຝຶກອົບຮົມວຽກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຢ່າງເປັນລະບົບຕໍ່ເນື່ອງ, ບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນສູງ; ເນື້ອໃນຫຼັກສູດການຮຽນ-ການສອນ ບາງຂະແໜງວິຊາສະເພາະ ໃນການຈັດຕັ້ງຝຶກອົບຮົມ ຍັງບໍ່ທັນຖືກຮັບຮອງ ແລະ ບໍ່ທັນເປັນເອກະພາບເທື່ອ;

ແຜນການບຳລຸງ-ກໍ່ສ້າງພະນັກງານ-ລັດຖະກອນ ບໍ່ທັນເປັນລະບົບຕໍ່ເນື່ອງ ແລະ ບໍ່ທັນສອດຄ່ອງສະພາບການພັດທະນາໃນຍຸກປະຈຸບັນ.

## III. ແຜນການພັດທະນາຊັບພະຍາກອນມະນຸດຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025

### 1. ເປົ້າໝາຍ

ພັດທະນາພະນັກງານ-ລັດຖະກອນໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄວາມໜັກ ແໜ້ນທາງດ້ານການເມືອງ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ມີຄວາມສາມັກຄີ, ຕື່ນຕົວ ແລະ ຫ້າວຫັນຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ;

ສ້າງແຜນບຳລຸງ-ກໍ່ສ້າງພະນັກງານສືບທອດປ່ຽນແທນ ຕິດພັນກັບແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ສ້າງວິຊາການໃຫ້ຊຳນານງານ, ສ້າງພະນັກງານກັບທີ່ ແລະ ສົ່ງລົງຮຽນຮູ້ວຽກຕົວຈິງຢູ່ທ້ອງຖິ່ນຮາກຖານ; ສ້າງຂີດຄວາມສາມາດໃຫ້ວິຊາການໃນແຕ່ລະດ້ານເຊັ່ນ: ດ້ານທິດສະດີການເມືອງ-ການປົກຄອງ, ວິຊາສະເພາະ, ເຕັກນິກ, ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ຢູ່ພາຍໃນ ແລະຕ່າງປະເທດ ໃຫ້ສົມຄູ່ກັບໜ້າທີ່ຮັບຜິດຊອບ ເພື່ອແນໃສ່ປະຕິບັດຄຳຂວັນທີ່ວ່າ: "ວິໄສທັດກວ້າງໄກ ບໍລິຫານໂປ່ງໃສ ວິຊາການກ້າວໄກ ບໍລິການວ່ອງໄວ ຈິດໃຈເບີກບານ";

ປັບປຸງກົງຈັກການຈັດຕັ້ງນັບແຕ່ຂັ້ນກະຊວງລົງເຖິງທ້ອງຖິ່ນ ໃຫ້ໄປຕາມທິດກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ, ມີປະສິດທິຜົນ, ໂປ່ງໃສ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ;

ປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານ-ລັດຖະກອນ ຕາມຄວາມເໝາະສົມ;

ຍົກສູງການມີສ່ວນຮ່ວມຂອງພະນັກງານ-ລັດຖະກອນ ເພດຍິງ, ຊົນເຜົ່າ ແລະ ຄົນຮຸ່ນໜຸ່ມໃນການຄຸ້ມຄອງບໍລິຫານວຽກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຕ່ລະຂັ້ນ;

ຊຸກຍູ້ສົ່ງເສີມພະນັກງານ-ລັດຖະກອນ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ສາມາດຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

### 2. ຂອບເຂດການນຳໃຊ້

ແຜນການພັດທະນາຊັບພະຍາກອນມະນຸດສະບັບນີ້ ແມ່ນນຳໃຊ້ສຳລັບການບຳລຸງ-ກໍ່ສ້າງ, ຝຶກອົບຮົມ, ຍົກລະດັບໄລຍະສັ້ນ,ໄລຍະຍາວ, ພັດທະນາວຽກງານສື່ມວນຊົນ, ພັດທະນາວຽກງານວັດທະນະທຳ ແລະ ພັດທະນາວຽກງານການທ່ອງທ່ຽວ ໃຫ້ແກ່ພະນັກງານ-ລັດຖະກອນ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

### 3. ແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຮອດປີ 2025

ແຜນການພັດທະນາຊັບພະຍາກອນມະນຸດຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປະກອບມີ 7 ເນື້ອໃນ ດັ່ງນີ້:

1. ເພີ່ມທະວີວຽກງານການເມືອງ-ແນວຄິດ ເຮັດໃຫ້ພະນັກງານ-ລັດຖະກອນ;

2. ກໍ່ສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ;
3. ພັດທະນາວຽກງານສື່ມວນຊົນ;
4. ພັດທະນາວຽກງານວັດທະນະທຳ;
5. ພັດທະນາວຽກງານການທ່ອງທ່ຽວ;
6. ພັດທະນາວຽກງານການສຶກສາ;
7. ສົ່ງເສີມການຮ່ວມມືການພັດທະນາກັບພາກພື້ນ ແລະ ສາກົນ.

## 4.1 ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນ

❖ **ຈຸດປະສົງ**

1) ເພື່ອເສີມຂະຫຍາຍນ້ຳໃຈຮັກຊາດ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ເຊີດຊູນ້ຳໃຈຮັກຊາດ, ດຸໝັ່ນ, ຊື່ສັດ, ປະຢັດ, ອົດທົນ, ມີຄຸນສົມບັດສິນທຳປະຕິວັດ ແລະ ຈັນຍາບັນ;
2) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄວາມຮັບຜິດຊອບ ແລະ ມີສະຕິເຄົາລົບກົດໝາຍ ແລະ ລະບຽບການ;
3) ເພື່ອຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆທີ່ອາດຈະເກີດໃນຖັນແຖວພະນັກງານ-ລັດຖະກອນ ຂະ ແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

❖ **ຄາດໝາຍ**

1) ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ເຂົ້າຮ່ວມການເຜີຍແຜ່, ເຊື່ອມຊຶມ ບັນດາແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ເອກະສານສຳຄັນຕ່າງໆ ໃຫ້ເປັນປົກກະຕິ ຢ່າງໜ້ອຍ 2 ຄັ້ງ ຕໍ່ຄົນຕໍ່ປີ;
2) ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຮັບຮູ້, ເຂົ້າໃຈແນວທາງນະໂຍບາຍຂອງພັກ, ມີຫຼັກໝັ້ນທາງດ້ານການເມືອງໜັກແໜ້ນ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ຕໍ່ອຸດົມການສັງຄົມນິຍົມ, ມີນ້ຳໃຈຮັກຊາດ, ຮັບໃຊ້ປະຊາຊົນ, ມີຄວາມສາມັກຄີ, ມີສະຕິລະວັງຕົວສູງຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ຈຳແນກມິດ, ສັດຕູຢ່າງຈະແຈ້ງ, ມີແນວຄິດອຸ່ນອ່ຽງ, ທຸ່ນທ່ຽງ;
3) ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມພູມໃຈຕໍ່ອາຊີບຂອງຕົນ, ມີຄວາມຫ້າວຫັນ, ບຸກບືນ, ມີຄວາມຮັບຜິດຊອບ ແລະ ຍົກສູງຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

❖ **ວຽກງານຈຸດສຸມ**

1) ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ບັນດາແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ເອກະສານສຳຄັນຕ່າງໆ; ຈັດຕັ້ງປາຖະກະຖາ, ເລົ່າມູນເຊື້ອໃນວັນສຳຄັນຂອງພັກ, ຂອງຊາດ ໃຫ້ທົ່ວເຖິງ;

2) ຊຸກຍູ້, ສົ່ງເສີມພະນັກງານ-ລັດຖະກອນ ໃຫ້ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ, ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ;
3) ປຸກລະດົມນ້ຳໃຈຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ຊຸກຍູ້ຊ່ວຍເຫຼືອກັນ ແລະ ເຮັດວຽກເປັນໝູ່ຄະນະ.

## 4.2 ກໍ່ສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ;

❖ **ຈຸດປະສົງ**

1) ເພື່ອກຳນົດແຜນຄວາມຕ້ອງການພະນັກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຮອດປີ 2025 ໃນແຕ່ລະດ້ານ, ແຕ່ລະສາຂາວິຊາຮຽນ ແລະ ລະດັບການສຶກສາ ໃຫ້ສອດຄ່ອງກັບສະພາບຕົວຈິງຂອງການຂະຫຍາຍຕົວຂອງວຽກງານ;
2) ເພື່ອສ້າງແຜນບຳລຸງ-ກໍ່ສ້າງພະນັກງານຂະແໜງການພາຍໃນ ໃຫ້ສອດຄ່ອງກັບແຜນຄວາມຕ້ອງການໃນແຕ່ລະໄລຍະ;
3) ເພື່ອປັບປຸງບຸກຄະລາກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄວາມເຂັ້ມແຂງ.

❖ **ຄາດໝາຍ**

1) ສ້າງແຜນຄວາມຕ້ອງການກໍ່ສ້າງພະນັກງານ-ລັດຖະກອນໃນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2) ສ້າງແຜນບຳລຸງ-ກໍ່ສ້າງພະນັກງານ-ລັດຖະກອນ ແຕ່ລະສາຂາວິຊາສະເພາະໃນແຕ່ລະໄລຍະໃຫ້ສອດຄ່ອງກັບແຜນຄວາມຕ້ອງການ;
3) ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳກ່ຽວກັບເງື່ອນໄຂ ແລະ ມາດຖານໃນການສົ່ງພະນັກງານໄປກໍ່ສ້າງ, ຍົກລະດັບ; ສ້າງເງື່ອນໄຂໃຫ້ພະນັກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ເປັນເພດຍິງ, ຊົນເຜົ່າ  ແລະ ພະນັກງານທີ່ບໍ່ມີໂອກາດ ໃຫ້ໄດ້ໄປສຶກສາຍົກລະດັບຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ;
4) ຕິດຕາມ ແລະ ປະເມີນຜົນພະນັກງານ-ລັດຖະກອນ ທີ່ໄດ້ຜ່ານການຝຶກອົບຮົມບຳລຸງກໍ່ສ້າງ, ຍົກລະດັບ ແລະ ຜູ້ທີ່ຮຽນຈົບມາປະຕິບັດໜ້າທີ່ວຽກງານ;

❖ **ວຽກງານຈຸດສຸມ**

1) ບຳລຸງກໍ່ສ້າງ ແລະ ພັດທະນາບຸກຄະລາກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ຂັ້ນສູນກາງ (ຂັ້ນກົມຫຼືທຽບເທົ່າ) ໄດ້ຮັບການບຳລຸງທິດສະດີການເມືອງ-ການປົກຄອງ ຂັ້ນສູງ 20 ຄົນ ແລະ ຂັ້ນຕົ້ນຫຼືລະບົບ 45 ວັນ ໃຫ້ໄດ້ 250 ຄົນ ຂຶ້ນໄປ;
2) ບຳລຸງກໍ່ສ້າງ ແລະ ພັດທະນາຄະລາກອນນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຮູ້ຄວາມສາມາດ ແລະ ທັກສະໃນການປະຕິບັດພາລະບົດບາດການບໍລິຫານ ແລະ ຄຸ້ມຄອງໃຫ້ມີຄຸນນະພາບສູງຂຶ້ນ;

3) ບຳລຸງກໍ່ສ້າງ ແລະ ພັດທະນາບຸກຄະລາກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດ້ານວິຊາສະເພາະ ໃຫ້ໄດ້ໃນຈຳນວນ 405 ຄົນ ລະດັບປະລິນຍາເອກ 07 ຄົນ, ປະລິນຍາໂທ 97 ຄົນ, ປະລິນຍາຕີ 281 ຄົນ ແລະ ຊັ້ນສູງ 20 ຄົນ;
4) ຈັດຝຶກອົບຮົມວິຊາສະເພາະຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ໄດ້ 5 ຊຸດ ຜູ້ເຂົ້າຮ່ວມ 50 ຄົນຕໍ່ຊຸດ;
5) ສ້າງນັກວິຊາການທາງດ້ານສິລະປະ ແລະ ວິຈິດສິນ ຢູ່ສະຖານການສຶກສາທີ່ຂຶ້ນກັບກະຊວງໃຫ້ໄດ້ໃນຈຳນວນ 2.825 ຄົນ ເຊັ່ນ: ລະດັບປະລິນຍາໂທ 125 ຄົນ, ປະລິນຍາຕີ 800 ຄົນ, ຊັ້ນສູງ 450 ຄົນ ແລະ ຊັ້ນກາງ 1.450 ຄົນ;
6) ປະເມີນຄວາມຕ້ອງການຝຶກອົບຮົມ ແລະ ຍົກລະດັບບຸກຄະລາກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນຕ່າງໆ ພ້ອມທັງສ້າງໂຄງການຝຶກອົບຮົມເພື່ອຮັບໃຊ້ວຽກງານດັ່ງກ່າວໃຫ້ມີປະສິດທິພາບສູງຂຶ້ນ;
7) ສ້າງແຜນການຈັດຕັ້ງຝຶກອົບຮົມ ແລະ ຍົກລະດັບທາງດ້ານວິຊາສະເພາະ, ພາສາຕ່າງປະເທດ, ໄອຊີທີ ແລະ ການບໍລິຫານຄຸ້ມຄອງລັດໃຫ້ພະນັກງານ-ລັດຖະກອນທົ່ວຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
8) ຄົ້ນຄວ້າ ແລະ ນຳສົ່ງພະນັກງານ-ລັດຖະກອນໄປຝຶກອົບຮົມ, ຍົກລະດັບ ຢູ່ພາຍໃນ ແລະ ຕ່າງປະເທດ;
9) ຈັດຕັ້ງຊຸດຝຶກອົບຮົມພະນັກງານ-ລັດຖະກອນຂັ້ນກະຊວງ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນເມືອງກ່ຽວກັບວຽກງານບໍລິຫານຄຸ້ມຄອງລັດ, ສະຖິຕິ, ແຜນການ, ງົບປະມານ ແລະ ການເງິນ;
10) ຊຸກຍູ້, ສົ່ງເສີມຫ້ອງການ, ບັນດາກົມ, ກອງ, ສະຖາບັນການສຶກສາ ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນເມືອງ ໃນການໃຫ້ໂອກາດພະນັກງານ-ລັດຖະກອນໄດ້ຮັບການພັດທະນາບຳລຸງຍົກລະດັບວິຊາສະເພາະໃຫ້ສູງຂຶ້ນ;
11) ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຝຶກອົບຮົມ ແລະ ຍົກລະດັບພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນແຕ່ລະໄລຍະ.

## 4.3 ພັດທະນາວຽກງານສື່ມວນຊົນ

- **ຈຸດປະສົງ**

1) ພັດທະນາບຸກະລາກອນໃນຂະແໜງຖະແຫຼງຂ່າວ-ສື່ມວນຊົນ ໃຫ້ມີຄວາມໜັກແໜ້ນທາງດ້ານທິດສະດີການເມືອງ, ຄວາມຮູ້ຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;
2) ພັດທະນາ ແລະ ຄຸ້ມຄອງສື່ມວນຊົນລາວໃຫ້ເປັນລະບົບທັນສະໄໝ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ, ມີຄຸນນະພາບ, ມີຫຼາກຫຼາຍ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ;

3) ສ້າງ, ປັບປຸງ ແລະ ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆໃນຂະແໜງສື່ມວນຊົນໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;
4) ສ້າງຄວາມເຂັ້ມແຂງໃນການພັດທະນາຜະລິດຕະພັນຂອງສື່ມວນຊົນໃຫ້ມີຄຸນນະພາບເພື່ອສ້າງເງື່ອນໄຂ ຂຸດຄົ້ນແຫຼ່ງແຫຼ່ງລາຍຮັບວິຊາການສາມາດກຸ້ມຕົນເອງເທື່ອລະກ້າວ;
5) ເສີມຂະຫຍາຍການພົວພັນຮ່ວມມືວຽກງານຖະແຫຼງຂ່າວ-ສື່ມວນຊົນກັບສາກົນ, ຊຸກຍູ້ສົ່ງເສີມການລົງທຶນລະຫວ່າງພາກລັດ ແລະ ພາກເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດໃນວຽກງານຖະແຫຼງຂ່າວ-ສື່ມວນຊົນໃຫ້ກວ້າງຂວາງ.

❖ **ຄາດໝາຍ**

1) ພັດທະນາບຸກຄະລາກອນສື່ມວນຊົນໃຫ້ມີຄວາມຮູ້ຄວາມສາມາດທາງດ້ານທິດສະດີການເມືອງ;
2) ສ້າງ ແລະ ປັບປຸງອຸປະກອນພາຫະນະສື່ຕ່າງໆທີ່ຈຳເປັນໃຫ້ເມືອງທຸກຍາກ ແລະ ເມືອງຍຸດທະສາດທີ່ຫຼົ່ແຫຼມຕາມເຂດຊາຍແດນ;
3) ປະສານສົມທົບກັບທ້ອງຖິ່ນ ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງ ແລະ ລະບົບໂທລະໂຄງຂັ້ນບ້ານ;
4) ພັດທະນາຜະລິດຕະພັນສື່ມວນຊົນໃຫ້ມີຄວາມຫຼາກຫຼາຍຕາມກົນໄກການຕະຫຼາດ, ມີເນື້ອໃນຖືກຕ້ອງຄົບຖ້ວນ, ແຫຼມຄົມຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຂອງສັງຄົມ;
5) ຂະຫຍາຍການຮ່ວມມືດ້ານຖະແຫຼງຂ່າວ-ສື່ມວນຊົນກັບບັນດາປະເທດຮ່ວມມິດຍຸດທະສາດ, ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມເຈລະຈາ ແລະ ບັນດາອົງການຈັດຕັ້ງສື່ມວນຊົນ ໃນພາກພື້ນ ແລະ ສາກົນ ເພື່ອຮັບປະກັນສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ;
6) ພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນທາງພາກລັດ ແລະ ພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ.

❖ **ວຽກງານຈຸດສຸມ**

1) ບຳລຸງກໍ່ສ້າງ ແລະ ຍົກລະດັບທິດສະດີການເມືອງໃຫ້ບຸກຄະລາກອນສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ;
2) ບຳລຸງກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ແລະ ພາສາຕ່າງປະເທດໃຫ້ບຸກຄະລາກອນຂະແໜງຖະແຫຼງຂ່າວ-ສື່ມວນຊົນ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
3) ປັບປຸງຍົກລະດັບພື້ນຖານວັດຖຸອຸປະກອນເຕັກນິກຮັບໃຊ້ການຜະລິດສື່ມວນຊົນ ແລະ ສື່ມວນຊົນແບບໃໝ່ໃຫ້ເປັນລະບົບຫັນຈາກລະບົບອານາລັອກໄປສູ່ລະບົບດິຈິຕອນໃນຂອບເຂດທົ່ວປະເທດ;
4) ພັດທະນາລະບົບຊ໋ອບແວຮັບ ແລະ ສົ່ງຂໍ້ມູນສື່ສິ່ງພິມ, ເອເລັກໂຕຣນິກລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມຄ່ອງຕົວ, ວ່ອງໄວ ແລະ ປອດໄພ;
5) ສ້າງສູນຖານຂໍ້ມູນຂ່າວສານສື່ມວນຊົນ ເພື່ອຄຸ້ມຄອງ ແລະ ບໍລິການໃນຂອບເຂດທົ່ວປະເທດ;

6) ເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆ ໃນຂົງເຂດວຽກງານຖະແຫຼງຂ່າວ-ສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ;
7) ສ້າງກິດຈະກຳຊຸກຍູ້ສົ່ງເສີມວຽກງານສື່ມວນຊົນດ້ວຍຫຼາຍຮູບແບບເພື່ອໂຄສະນາສື່ມວນຊົນ;
8) ຊຸກຍູ້ການຈັດຕັ້ງປະຕິບັດສັນຍາການຮ່ວມມືສ້າງເຄືອຂ່າຍປະສານງານ ເພື່ອເຊື່ອມສານວຽກງານ ຖະແຫຼງຂ່າວ-ສື່ມວນຊົນກັບປະເທດເພື່ອມິດຍຸດທະສາດ.

## 4.4 ພັດທະນາວຽກງານວັດທະນະທຳ

❖ **ຈຸດປະສົງ**

1) ພັດທະນາບຸຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການ ເພື່ອຮັບປະກັນທາງປະລິມານ ແລະ ຄຸນນະພາບ;
2) ສ້າງ ແລະ ພັດທະນາພື້ນຖານໂຄງລ່າງໃນຂະແໜງວັດທະນະທຳໃຫ້ສົມຄູ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ;
3) ສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກຳຕ່າງໆໃນຂະແໜງວັດທະນະທຳໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;
4) ຄຸ້ມຄອງ ແລະ ສົ່ງເສີມການອະນຸລັກ, ປົກປັກຮັກສາ, ຟື້ນຟູສືບທອດ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກວັດທະນະທຳອັນດີງາມຂອງຊາດໃຫ້ມີຄວາມຍືນຍົງ;
5) ໂຄສະນາ, ເຜີຍແຜ່ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດອອກສູ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ, ແລະປ່ຽນຮ່ວມມືດ້ານວັດທະນະທຳກັບສາກົນຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ;
6) ພັດທະນາຜະລິດຕະພັນວັດທະນະທຳໃຫ້ມີຫຼາກຫຼາຍທາງດ້ານປະລິມານ ແລະ ຄຸນນະພາບ.

❖ **ຄາດໝາຍ**

1) ພັດທະນາບຸຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມຮູ້ຄວາມສາມາດທາງດ້ານວິຊາການໃຫ້ໄດ້ 500 ເທື່ອຄົນ;
2) ສ້າງ, ປັບປຸງກົດໝາຍ ແລະ ບັນດານິຕິກຳໃຕກົດໝາຍຕ່າງໆໃນຂະແໜງວັດທະນະທຳໃຫ້ໄດ້ 10 ສະບັບ ແລະ ເຜີຍແຜ່ ໃຫ້ທົ່ວເຖິງ;
3) ປັບປຸງ ແລະ ພັດທະນາເຄື່ອງອຸປະກອນຮັບໃຊ້ດ້ານເຕັກນິກ ແລະ ວິຊາການໃນຂະແໜງວັດທະນະທຳໃຫ້ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ;
4) ພັດທະນາພື້ນຖານໂຄງລ່າງໃຫ້ໄດ້ມາດຕະຖານເປັນລະບົບຄົບຊຸດເພື່ອອຳນວຍການສະດວກໃຫ້ແກ່ຂະແໜງ ວັດທະນະທຳທຸກປະເພດ;
5) ສ້າງຄວາມເຂັ້ມແຂງເພື່ອສົ່ງເສີມກິດຈະກຳທາງດ້ານສິລະປະ-ວັດທະນະທຳ;
6) ສ້າງ ແລະ ປັບປຸງປຶ້ມຄູ່ມືການຄຸ້ມຄອງສິລະປະ-ວັດທະນະທຳ;
7) ສ້າງ ແລະ ປັບປຸງຫໍພິພິທະພັນວັດທະນະທຳ, ປະຫວັດສາດໃຫ້ເປັນລະບົບດີຈີຕອນ.

❖ **ວຽກງານຈຸດສຸມ**

1) ພັດທະນາບຸກຄະລາກອນໃນຂະແໜງວັດທະນະທຳໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;
2) ພັດທະນາສ້າງຄວາມເຂັ້ມແຂງທາງດ້ານເຕັກນິກ ແລະ ວິຊາການໃຫ້ບຸກຄະລາກອນໃນຂະແໜງວັດທະນະທຳ;
3) ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆໃຕ້ກົດໝາຍໃນຂົງເຂດວັດທະນະທຳໃຫ້ແທດເໝາະກັບການພັດທະນາຂອງສັງຄົມ;
4) ປັບປຸງຖານຂໍ້ມູນໃນຫໍສະໝຸດແຫ່ງຊາດ ແລະ ສຳຫຼວດ, ເກັບກຳທ້ອນໂຮມວັດຖຸພັນເພື່ອນຳມາຈັດວາງສະແດງໃນຫໍພິພິທະພັນແຫ່ງຊາດ;
5) ປະສານສົມທົບກັບທ້ອງຖິ່ນໃນການສ້າງຄອບຄົວວັດທະນະທຳ ແລະ ບ້ານວັດທະນະທຳ;
6) ບູລະນະປະຕິສັງຂອນມໍລະດົກວັດທະນະທຳໃນຂອບເຂດທົ່ວປະເທດ;
7) ໂຄສະນາເຜີຍແຜ່ ແລະ ສົ່ງເສີມກິດຈະກຳວັດທະນະທຳ ຢູ່ພາຍໃນ ແລະ ຕ່າງປະເທດ;
8) ຊຸກຍູ້ການຈັດຕັ້ງປະຕິບັດສັນຍາການຮ່ວມມືກັບບັນດາປະເທດເພື່ອນມິດຍຸທະສາດ, ບັນດາປະເທດອາຊຽນ, ປະເທດຄູ່ເຈລະຈາ ແລະ ບັນດາອົງການຈັດຕັ້ງສາກົນກ່ຽວກັບວຽກງານວັດທະນະທຳ.

### 4.5 ພັດທະນາວຽກງານການທ່ອງທ່ຽວ

❖ **ຈຸດປະສົງ**

1) ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;
2) ພັດທະນາ ແລະ ປັບປຸງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;
3) ສ້າງປັບປຸງ ແລະ ເຜີຍແຜ່ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍໃນຂະແໜງການທ່ອງທ່ຽວໃຫ້ຮັດກຸມ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ;
4) ພັດທະນາ ແລະ ປັບປຸງສະຖານທີ່ທ່ອງທ່ຽວ, ຜະລິດຕະພັນ ແລະ ການບໍລິການທ່ອງທ່ຽວໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງ;
5) ປະສານສົມທົບ ແລະ ຮ່ວມມືກັບບັນດາຂະແໜງການທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ໃນການພັດທະນາ, ໂຄສະນາ ແລະ ຄຸ້ມຄອງການທ່ອງທ່ຽວໃຫ້ມີປະສິດທິພາບ.

❖ **ຄາດໝາຍ**

1) ສ້າງແຜນການພັດທະນາແຫຼ່ງທ່ອງທ່ຽວທີ່ໂດດເດັ່ນສາມາດເຊື່ອມໂຍງກັບພາກພື້ນໃຫ້ມີຄຸນນະພາບ, ໄດ້ມາດຕະຖານຂອງ ສປປລາວ;
2) ປັບປຸງກໍ່ສ້າງພື້ນຖານໂຄງລ່າງໃນຂະແໜງການທ່ອງທ່ຽວໃຫ້ໄດ້ມາດຕະຖານທັງປະລິມານ ແລະ ຄຸນະພາບ;

3) ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນການຄຸ້ມຄອງສະຖານທີ່ການທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ ແລະ ທຸລະກິດການທ່ອງທ່ຽວໃຫ້ແທດເໝາະກັບສະພາບຄວາມເປັນຈິງ;
4) ປັບປຸງ ແລະ ປະກອບອຸປະກອນຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວຢູ່ແຕ່ລະແຂວງ, ຕາມຕົວເມືອງທ່ອງທ່ຽວ ແລະ ດ່ານສາກົນໃຫ້ເປັນລະບົບ;
5) ຜະລິດອຸປະກອນການໂຄສະນາການທ່ອງທ່ຽວໃຫ້ໄດ້ຫຼາຍພາສາເພື່ອຕອບສະໜອງໃຫ້ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;
6) ປັບປຸງ ແລະ ອອກແບເວັບໄຊການທ່ອງທ່ຽວໃຫ້ມີຫຼາຍພາສາເພື່ອເຮັດໃຫ້ເປັນທີ່ໜ້າສົນໃຈ ແລະ ສະໜອງຂໍ້ມູນໃຫ້ແກ່ນັກທ່ອງທ່ຽວ;
7) ພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວທາງພາກລັດ ແລະ ເອກະຊົນໄດ້ເຂົ້າຮ່ວມຝຶກອົບຮົມຍົກລະດັບຂີດຄວາມສາມາດດ້ານວິຊາການໃຫ້ໄດ້ 6,000 ເທື່ອຄົນ.

❖ **ວຽກງານຈຸດສຸມ**

1) ພັດທະນາບຸຄະລາກອນໃນຂະແໜງການທ່ອງທ່ຽວໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາການຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ;
2) ຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນໃນຂະແໜງການທ່ອງທ່ຽວໃຫ້ມີຄຸນນະພາບສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ;
3) ສ້າງ ແລະ ປັບປຸງຫຼັກສູດຝຶກອົບຮົມໄລຍະສັ້ນ ແລະ ຝຶກອົບຮົມຄູຝຶກໃນຂະແໜງການທ່ອງທ່ຽວ;
4) ຈັດຕັ້ງຝຶກອົບຮົມປູກຈິດສຳນຶກໃຫ້ຜູ້ປະກອບການ ແລະ ປະຊາຊົນເຂົ້າໃຈຕໍ່ກັບວຽກງານການທ່ອງທ່ຽວຢ່າງກວ້າງຂວາງ;
5) ສ້າງ ແລະ ປັບປຸງກົດໝາຍ, ບັນດານິຕິກຳຕ່າງໆກ່ຽວຂ້ອງກັບການທ່ອງທ່ຽວ ພ້ອມທັງເຜີຍແຜ່ໃຫ້ພາກລັດ, ພາກທຸລະກິດ ແລະ ປະຊາຊົນ ໃຫ້ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ;
6) ສ້າງເຄືອຄ່າຍປະສານງານລະຫວ່າງພາກລັດ ແລະ ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດຕໍ່ກັບການພັດທະນາວຽກງານການທ່ອງທ່ຽວ;
7) ປັບປຸງພັດທະນາພື້ນຖານໂຄງລ່າງສິ່ງອຳນວຍຄວາມສະດວກທາງການທ່ອງທ່ຽວດ້ານປະລິມານ ແລະ ຄຸນນະພາບຕາມມາດຕະຖານພາກພື້ນ ແລະ ສາກົນ;
8) ພັດທະນາປັບປຸງພັດທະນາລະບົບການບໍລິການຂົນສົ່ງການທ່ອງທ່ຽວທາງບົກ, ທາງອາກາດ ແລະ ທາງນໍ້າ;
9) ພັດທະນາຊັບພະຍາກອນການທ່ອງທ່ຽວທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ການທ່ອງທ່ຽວກະສິກຳໃຫ້ມີຄວາມຍືນຍົງ;
10) ປັບປຸງພັດທະນາຜະລິດຕະພັນການທ່ອງທ່ຽວແບບອະນຸລັກ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ຕາມມາດຕະຖານລະດັບຊາດ ແລະ ພາກພື້ນ;
11) ພັດທະນາລະບົບເກັບກຳຂໍ້ມູນ, ການວິເຄາະຂໍ້ມູນ ແລະ ການລາຍງານວຽກງານການທ່ອງທ່ຽວ.

## 4.6 ພັດທະນາວຽກງານການສຶກສາ

❖ **ຈຸດປະສົງ**

1) ພັດທະນາຄູ, ອາຈານ ຢູ່ບັນດາສະຖານການສຶກສາທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ກຳແໜ້ນທາງທິດສະດີການເມືອງ ແລະ ວິຊາການ ທັງປະລິມານ ແລະ ຄຸນນະພາບ;
2) ພັດທະນາພື້ນຖານໂຄງລ່າງຂອງສະຖານການສຶກສາທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນລະບົບຖືກຕ້ອງຕາມ 3 ຫຼັກສະນະ, 5 ຫຼັກມູນຂອງມາດຕະຖານການສຶກສາກຳນົດໄວ້;
3) ພັດທະນາຫຼັດສູດການຮຽນ-ການສອນຂອງບັນດາສະຖານການສຶກສາທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
4) ເສີມຂະຫຍາຍການພົວພັນຮ່ວມມືວຽກງານການສຶກສາກັບສະຖາບັນການສຶກສາພາຍໃນ ແລະ ຕ່າງປະເທດຢ່າງກວ້າງຂວາງ.

❖ **ຄາດໝາຍ**

1) ພັດທະນາຄູ, ອາຈານ ຢູ່ບັນດາສະຖານການສຶກສາທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ກຳແໜ້ນທາງທິດສະດີການເມືອງ ແລະ ວິຊາສະເພາະໃຫ້ມີຄວາມຮູ້ຄວາມສາມາດຢ່າງມີຄຸນນະພາບສູງ;
2) ສ້າງ ແລະ ປັບປຸງຫຼັກສູດການຮຽນ-ການສອນ ແລະ ການຈັດຕັ້ງຊຸດຝຶກອົບຮົມວຽກວິຊາສະເພາະຂອງຂະ ແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ຊັດເຈນ, ເປັນເອກະພາບ ແລະ ສອດຄ່ອງກັບວຽກຕົວຈິງ;
3) ຈັດຕັ້ງການຝຶກອົບຮົມວຽກວິຊາສະເພາະ ແລະ ວິຊາຄູ ໃຫ້ລັດຖະກອນຄູ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃຫ້ມີຄວາມຮັບປະກັນ ແລະ ມີຄຸນນະພາບ;
4) ປັບປຸງ ແລະ ກໍ່ສ້າງ ຫໍພັກນັກສຶກສາ, ຫ້ອງວາງສະແດງ, ຫ້ອງສະໝຸດ ແລະ ຫ້ອງຮຽນ ໃຫ້ໄດ້ມາດຕະຖານການສຶກສາ.

❖ **ວຽກງານຈຸດສຸມ**

1) ສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ວິຊາສະເພາະໃຫ້ແກ່ຄູ, ອາຈານ ມີຄວາມຮັບປະກັນດ້ານຄວາມຮູ້ຄວາມສາມາດໃຫ້ມີປະສິດທິພາບສູງ;
2) ປັບປຸງຫຼັກສູດການຮຽນ-ການສອນຂອງບັນດາສະຖານການສຶກສາໃຫ້ມີຄວາມກ້າວໜ້າ ແລະ ທັນສະໄໝສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
3) ສົ່ງເສີມການຮ່ວມມືສອງຝ່າຍ, ຫຼາຍຝ່າຍຂອງສະຖາບັນການສຶກສາ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານໃຫ້ມີປະສິທິພາບ ແລະ ປະສິດທິຜົນສູງຂຶ້ນເຊັ່ນ: ການແລກປ່ຽນຄະນະຜູ້ແທນ, ການເຂົ້າຮ່ວມຝຶກອົບຮົມ, ຍົກລະດັບ, ທັດສະນະສຶກສາ;
4) ສົ່ງເສີມການຮ່ວມມືທາງດ້ານການພັດທະນາການສຶກສາຢູ່ພາຍໃນ ແລະ ຕ່າງປະເທດ ມີການແລກປ່ຽນຖອດຖອນບົດຮຽນ, ທັດສະນະສຶກສາລະຫວ່າງຄູ, ອາຈານ ແລະ ນັກສຶກສາ.

### 4.7 ສົ່ງເສີມການຮ່ວມມືການພັດທະນາກັບພາກພື້ນ ແລະ ສາກົນ

❖ **ຈຸດປະສົງ**

1) ເພື່ອເຮັດໃຫ້ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຮູ້, ຄວາມສາມາດໃນການພົວພັນຮ່ວມມືກັບອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
2) ເພື່ອຍາດແຍ່ງການຊ່ວຍເຫຼືອ ແລະ ຮ່ວມມືທາງດ້ານແຫຼ່ງທຶນ ແລະ ເຕັກນິກວິຊາການເພື່ອພັດທະນາວຽກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
3) ເພື່ອແລກປ່ຽນ, ຖອດຖອນບົດຮຽນ, ປະສົບການ, ຂໍ້ມູນຂ່າວສານທັງພາຍໃນ ແລະ ຕ່າງປະເທດ;

❖ **ຄາດໝາຍ**

1) ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍສະເພາະຜູ້ຮັບຜິດຊອບວຽກງານພົວພັນຕ່າງປະເທດ ມີຄວາມຮູ້, ຄວາມສາມາດ ແລະ ປະສົບການສູງໃນການພົວພັນຮ່ວມມືກັບຕ່າງປະທດ;
2) ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສາມາດຍາດແຍ່ງການຊ່ວຍເຫຼືອທາງດ້ານແຫຼ່ງທຶນ ແລະ ວິຊາການເພື່ອພັດທະນາວຽກງານຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃຫ້ສູງຂຶ້ນ;
3) ມີການແລກປ່ຽນ, ຖອດຖອນບົດຮຽນ, ປະສົບການ ແລະ ຂໍ້ມູນຂ່າວສານໃນລະດັບຕ່າງໆຫຼາຍຂຶ້ນ.

❖ **ວຽກງານຈຸດສຸມ**

1) ສ້າງຂີດຄວາມສາມາດດ້ານພາສາຕ່າງປະເທດໃຫ້ແກ່ຜູ້ເຮັດວຽກງານການຕ່າງປະເທດ ໃນຂັ້ນກະຊວງ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ ແລະ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນເມືອງ;
2) ສົ່ງເສີມການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານໃຫ້ມີປະສິທິພາບ ແລະ ປະສິດທິຜົນສູງຂຶ້ນເຊັ່ນ: ການແລກປ່ຽນຄະນະຜູ້ແທນ, ການເຂົ້າຮ່ວມຝຶກອົບຮົມ, ຍົກລະດັບ, ທັດສະນະສຶກສາ;
3) ສ້າງລະບົບເຄື່ອຂ່າຍຂໍ້ມູນ-ຂ່າວສານດ້ານວຽກງານຂະແໜງການພາຍໃນໃຫ້ທັນກັບສະພາບການ, ໜ້າເຊື່ອຖືສາມາດເຊື່ອໂຍງກັບພາກພື້ນ ແລະ ສາກົນໄດ້;
4) ສົ່ງເສີມຂອບຂອງການຮ່ວມມືກັບບັນດາປະເທດເພື່ອນມິດ ເຊັ່ນ: ສ.ສ ຫວຽດນາມ, ສປຈີນ, ໂຄງການຮ່ວມມືໃນຂອບອາຊຽນ, ໂຄງການຮ່ວມມືກັບໄຈກາ, ລາຊະອາຈັກໄທ, ອົງການຮ່ວມມືຂອງປະເທດຕ່າງໆ ໃນວຽກງານພັດທະນາຊັບພະຍາກອນມະນຸດ.

## IV. ການຕິດຕາມ ແລະ ປະເມີນຜົນ

ເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະ ແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີຄວາມຈຳເປັນຕ້ອງໄດ້ມີການຕິດຕາມປະເມີນຜົນໂດຍອີງໃສ່ບາງເນື້ອໃນດັ່ງນີ້:

1. ແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025;
2. ແຜນປະຕິບັດງານພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025;
3. ຄາດໝາຍຄວາມຕ້ອງການກໍ່ສ້າງ, ຝຶກອົບຮົມ, ຍົກລະດັບ ແລະ ການດຳລົງຕຳແໜ່ງບໍລິຫານປະເພດຕ່າງ ຂອງພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
4. ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນແຕ່ລະປີ;
5. ແຜນພັດທະນາ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

## V. ມາດຕະການຈັດຕັ້ງປະຕິບັດ

1. ເພີ່ມທະວີການນຳພາຂອງຄະນະພັກ, ຄະນະນຳທຸກຂັ້ນໃນການຈັດຕັ້ງປະຕິບັດແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ປະກົດຜົນເປັນຈິງ;
2. ຫ້ອງການກະຊວງ, ບັນດາກົມ, ກອງ, ສະຖາບັນການສຶກສາ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນເມືອງ ຕ້ອງໄດ້ຈັດຕັ້ງການເຜີຍແຜ່, ຄົ້ນຄວ້າເນື້ອໃນແຜນການພັດທະນາຊັບພະຍາກອນມະນຸດສະບັບນີ້ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ກົມກອງຂອງຕົນ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ພ້ອມຫັນການພັດທະນາຊັບພະຍາກອນມະນຸດຂອງກະຊວງມາເປັນແຜນການ ແລະ ໂຄງການລະອຽດ;
3. ຊຸກຍູ້ໃຫ້ສາມອົງການຈັດຕັ້ງມະຫາຊົນ ແລະ ສື່ຕ່າງໆຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທົ່ວປະເທດ ໃຫ້ມີການຈັດຕັ້ງການເຜີຍແຜ່ແຜນການພັດທະນາຊັບພະຍາກອນມະນຸດ ສະບັບນີ້ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ເອົາໃຈໃສ່ຍາດແຍ່ງ ແລະ ສຸມທຶນຮອນເຂົ້າໃນການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງລະດົມ, ຊຸກຍູ້, ສົ່ງເສີມການປະກອບສ່ວນຂອງສັງຄົມ ແລະ ຄູ່ຮ່ວມພັດທະນາເພື່ອໃຫ້ບັນລຸຜົນຕາມຄາດໝາຍທີ່ວາງໄວ້;
5. ເກັບກຳຂໍ້ມູນ-ຂ່າວສານ, ສະຖິຕິ ດ້ານການພັດທະນາພະນັກງານ-ລັດຖະກອນຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຕິດຕາມ, ປະເມີນຜົນ ແລະ ລາຍງານໃຫ້ທັນການ;
6. ກົມຈັດຕັ້ງ ແລະ ພະນັກງານ ແລະ ຄະນະຮັບຜິດຊອບການສ້າງແຜນຍຸດທະສາດດັ່ງກ່າວເປັນໃຈກາງໃນການປະສານງານກັບບັນພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຕິດຕາມ, ປະເມີນຜົນ ແລະ ລາຍງານ

ການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

# ເອກະສານຊ້ອນທ້າຍ

## ແຜນການພັດທະນາຊັບພະຍາກອນມະນຸດຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 2021-2025

| ຍຸດທະສາດຍ່ອຍ | ວຽກງານຈຸດສຸມ | ຕົວຊີ້ບອກຂອງວຽກງານຈຸດສຸມ | ກິດຈະກຳຫຼັກ | ໄລຍະເວລາປະຕິບັດ | | | | | ງົບປະມານທັງໝົດ | |
|---|---|---|---|---|---|---|---|---|---|---|
| | | | | 2021 | 2022 | 2023 | 2024 | 2025 | ງົບທີ່ຕ້ອງການ (ລ້ານກີບ) | % ຂອງງົບທີ່ມີທຽບກັບງົບທີ່ຕ້ອງການ |
| 1. ເພີ່ມທະວີວຽກງານການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນທົ່ວຂະແໜງການ | 1.1 ບຳລຸງ-ກໍ່ສ້າງພະນັກງານ-ລັດຖະກອນ ໃຫ້ມີຄຸນສົມບັດສິນທຳປະຕິວັດ, ມີ ຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມຈົງຮັກພັກດີ ຕໍ່ປະເທດຊາດ, ມີຄວາມຮູ້, ຄວາມສາມາດ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຕາມໜ້າທີ່ການເມືອງຂອງພັກ. | 1.1.1 ພະນັກງານນຳພາ-ຄຸ້ມຄອງ, ສະມາຊິກພັກໄດ້ຮັບການເຊື່ອມຊຶມ ແລະ ບຳລຸງທິດສະດີການເມືອງ ໃນລະດັບຂັ້ນຕົ້ນຂຶ້ນໄປ. | 1.1.1 ເຂົ້າຮ່ວມຮັບຟັງການເຜີຍແຜ່ ແລະ ເຊື່ອມຊຶມມະຕິຄຳສັ່ງຕ່າງໆ | √ | √ | √ | √ | √ | 100 | 0 |
| | | | 1.1.2 ຝຶກອົບຮົມບຳລຸງທິດດີການເມືອງ | √ | √ | √ | √ | √ | 500 | |
| 2. ກໍ່ສ້າງ ແລະ ຄຸ້ມຄອງພະນັກງານ-ລັດຖະກອນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ | 2.1. ພັດທະນາພະນັກງານນຳພາ-ຄຸ້ມຄອງຂອງຂະແໜງການຕ່າງໆໃຫ້ມີຄຸນສົມບັດດີ, ມີຄວາມຮູ້, ຄວາມສາມາດໃນການຄຸ້ມຄອງບໍລິຫານ ສາມາດນຳພາວຽກງານທີ່ຕົນຮັບຜິດຊອບໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ. | 2.1.1 ຈຳນວນພະນັກງານນຳພາ-ຄຸ້ມຄອງຕຳແໜ່ງປະເພດ 2, 3, 4 ແລະ 5 | 2.1.1 ບຳລຸງທິດສະດີການເມືອງຂັ້ນຕົ້ນ, ຂັ້ນກາງ ແລະ ຂັ້ນສູງ. | √ | √ | √ | √ | √ | | |
| | | | 2.1.2 ເຂົ້າຮ່ວມຝຶກອົບຮົມວິຊາສະເພາະ | √ | √ | √ | √ | √ | | |
| | 2.2 ພັດທະນາພະນັກງານ-ວິຊາການການຕ່າງໆໃຫ້ມີຄຸນສົມບັດດີ, ມີຄວາມຮູ້, ຄວາມສາມາດໃນການ | 2.2.1 ພະນັກງານ-ລັດຖະກອນ ຊັ້ນປະລິນຍາເອກ. | 2.2.1 ສ້າງແຜນການຍົກລະດັບໃຫ້ພະນັກງານ-ລັດຖະກອນ ຊັ້ນປະລິນຍາເອກ. | √ | √ | √ | √ | √ | | |

| ຍຸດທະສາດຍ່ອຍ | ວຽກງານຈຸດສຸມ | ຕົວຊີ້ບອກຂອງວຽກງານຈຸດສຸມ | ກິດຈະກຳຫຼັກ | ໄລຍະເວລາປະຕິບັດ | | | | | ງົບປະມານທັງໝົດ | |
|---|---|---|---|---|---|---|---|---|---|---|
| | | | | 2021 | 2022 | 2023 | 2024 | 2025 | ງົບທີ່ຕ້ອງການ (ລ້ານກີບ) | % ຂອງງົບທີ່ມີທຽບກັບງົບທີ່ຕ້ອງການ |
| | ຄຸ້ມຄອງບໍລິຫານສາມາດນຳພາວຽກງານທີ່ຕົນຮັບຜິດຊອບໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ | 2.2.2 ພະນັກງານ-ລັດຖະກອນ ຊັ້ນປະລິນຍາໂທ. | 2.2.2 ສ້າງແຜນການຍົກລະດັບໃຫ້ພະນັກງານ-ລັດຖະກອນ ຊັ້ນປະລິນຍາໂທ. | √ | √ | √ | √ | √ | | |
| | | 2.2.3 ພະນັກງານ-ລັດຖະກອນ ຊັ້ນປະລິນຍາຕີ . | 2.2.3 ສ້າງແຜນການຍົກລະດັບໃຫ້ພະນັກງານ-ລັດຖະກອນ ຊັ້ນປະລິນຍາຕີ. | √ | √ | √ | √ | √ | | |
